ຕາມທີ່ທ່ານອາດຈະຊາບຢູ່ແລ້ວວ່າ ໃນປີທີ່ຜ່ານມາ ຜູ້ສ້າງນິຕິກຳໄດ້ອອກກົດໝາຍ ວ່າດ້ວຍການລາພັກເພື່ອດູແລຄອບຄົວ ແລະ ທາງການແພດໂດຍທີ່ໄດ້ຮັບຄ່າຈ້າງ (Paid Family and Medical Leave Act - PFML) ເຊິ່ງເປັນສະຫວັດດີການໃໝ່ສຳລັບພະນັກງານຂອງລັດ Massachusetts. ຄ້າຍຄືກັນກັບພະນັກງານທຸກຄົນໃນລັດ Massachusetts, ອຳນາດການປົກຄອງ ຂອງລັດ ກໍຈຳເປັນຕ້ອງເຂົ້າຮ່ວມໃນໂຄງການນີ້ ເຊິ່ງບໍລິຫານໂດຍພະແນກຄຸ້ມຄອງການລາພັກເພື່ອດູແລຄອບຄົວ ແລະ ທາງການ ແພດ (Department of Family and Medical Leave - DFML) ແລະ ກົດໝາຍຍັງລະບຸວ່າ ພະແນກສຶກສາ ແລະ ການດູແລກ່ອນໄວຮຽນ (Department of Early Education and Care - EEC) ແມ່ນເປັນນາຍຈ້າງຂອງຜູ້ໃຫ້ບໍລິ ການລ້ຽງເດັກ.

ກົດໝາຍຂອງລັດ Massachusetts ໄດ້ລະບຸວ່າ ຜູ້ໃຫ້ບໍລິການລ້ຽງເດັກ ແມ່ນລູກຈ້າງຂອງພະແນກສຶກສາ ແລະ ການດູແລ ກ່ອນໄວຮຽນ (EEC) ເພື່ອຈຸດປະສົງສະເພາະ. ກະລຸນາເບິ່ງ M.G.L 15D § 17 (b) ແລະ (c). ໃນເບື້ອງຕົ້ນ EEC ແມ່ນເປັນນາຍຈ້າງພຽງຜູ້ດຽວ ສຳລັບວຽກງານທີ່ຕິດພັນກັບແຮງງານ ແລະ ການຫັກຄ່າຈ້າງ. ນິຕິກຳ Earned Sick Time ໄດ້ຂະຫຍາຍຂອບເຂດນີ້ ແລະ ນິຕິກຳວ່າດ້ວຍການລາພັກເພື່ອດູແລຄອບຄົວ ແລະ ທາງການແພດໂດຍທີ່ໄດ້ຮັບຄ່າຈ້າງ (Paid Family Medical Leave - PFML) ເຊິ່ງຖືເອົາ EEC ເປັນນາຍຈ້າງ ເພື່ອຈຸດປະສົງເຫຼົ່ານັ້ນເຊັ່ນດຽວກັນ. ສາຍພົວພັນແບບນາຍຈ້າງ-ລູກຈ້າງ ລະຫວ່າງ EEC ແລະ ຜູ້ໃຫ້ບໍລິການລ້ຽງເດັກ ແມ່ນບໍ່ໄດ້ສ້າງສາຍພົວພັນແບບນາຍຈ້າງ-ລູກຈ້າງ ລະຫວ່າງ ຜູ້ໃຫ້ບໍລິການລ້ຽງເດັກ ແລະ ໜ່ວຍງານຊັບພະຍາກອນ ແລະ ແນະນຳກ່ຽວກັບການລ້ຽງເດັກ (Child Care Resource and Referral agencies - CCRRs) ຫຼື ລະບົບລ້ຽງເດັກ (Family Child Care Systems - FCCS). ມັນຍັງບໍ່ໄດ້ສ້າງສາຍພົວພັນແບບນາຍຈ້າງ-ລູກຈ້າງເພື່ອຈຸດປະສົງອື່ນ.

ກົດໝາຍໄດ້ກຳນົດໃຫ້ນາຍຈ້າງເປັນເຮັດແຈ້ງການ ກ່ຽວກັບກົດໝາຍເຖິງລູກຈ້າງທຸກຄົນໂດຍກົງ. ລູກຈ້າງທຸກຄົນຕ້ອງຮັບຮູ້ ແຈ້ງການດັ່ງກ່າວ (ຫຼື ມີການປະຕິດການຮັບຮູ້). ໃນວັນທີ 30 ກັນຍາ 2019, EEC ຈະສົ່ງແຈ້ງການທາງອີເມວໄປຫາຜູ້ໃຫ້ບໍລິການລ້ຽງເດັກ ກ່ຽວກັບການປ່ຽນແປງທາງດ້ານກົດໝາຍ. EEC ຈະສົ່ງແຈ້ງການສະບັບນີ້ອີກຄັ້ງ ເພື່ອເຕືອນທ່ານກ່ຽວກັບ ການປ່ຽນແປງທີ່ຈະເກີດຂຶ້ນ. **ທ່ານສາມາດສົ່ງຄຳຖາມ ແລະ ແບບຟອມຮັບຮູ້ເຖິງ: eecpfml@mass.gov.**

.

ແຈ້ງການສະບັບນີ້ແມ່ນຖືກແປເປັນ 13 ພາສາ ແລະ ມີຢູ່ໃນລິ້ງນີ້: https://www.mass.gov/lists/paid-family-and-medical-leave-downloads-for-massachusetts-employers.